ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການຄ້າ

ເລກທີ 0945 /ກຄ.ຕປທ

ນະຄອນຫລວງວຽງຈັນ, ວັນທີ 13/9/2005

# ແຈ້ງການ

ເຖິງ : - ຫົວໜ້າພະແນກການຄ້າແຂວງ, ນະຄອນຫລວງ, ເຂດພິເສດ

- ປະທານສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ

ເລື່ອງ : ການຈັດຕັ້ງປະຕິບັດການນຳເຂົ້າ ແລະ ສົ່ງອອກສຳລັບ ສິນຄ້າຂອງ ສປປລາວ ແລະ ສ.ສ ຫວຽດນາມ ທີ່ໄດ້ບຸລິມະສິດອັດຕາພາສີຂາເຂົ້າ ຊຶ່ງກັນ ແລະ ກັນ.

- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 24/ນຍ ລົງວັນທີ 01/9/05 ປະຕິບັດຕາມຂໍ້ຕົກລົງ ສະບັບລົງວັນທີ 28/7/05 ລະຫວ່າງ ກະຊວງການຄ້າ ແຫ່ງ ສປປ... ກະຊວງການຄ້າ ແຫ່ງ ສ.ສ ຫວຽດນາມ ວ່າດ້ວຍການໃຫ້ບຸລິມະສິດອັດຕາພາສີຂາເຂົ້າ ຊຶ່ງກັນ ແລະ ກັນ ສຳລັບສິນຄ້າຂອງ ສປປລາວ ແລະ ສ.ສ ຫວຽດນາມ.

ກະຊວງການຄ້າ ຂໍຖືເປັນກຽດ ແຈ້ງການ ມາຍັງ ທ່ານ ກ່ຽວກັບການຈັດຕັ້ງປະຕິບັດການນຳເຂົ້າ ແລະ ສົ່ງອອກ ສຳລັບ ສິນຄ້າຂອງ ສປປລາວ ແລະ ສ.ສ ຫວຽດນາມ ທີ່ໄດ້ບຸລິມະສິດອັດຕາພາສີຂາເຂົ້າ ຊຶ່ງກັນ ແລະ ກັນ ດັ່ງຕໍ່ໄປນີ້:

1. ໃຫ້ພະແນກການຄ້າລາຍງານໃຫ້ການນຳຂອງແຂວງກ່ຽວກັບແຜນການທີ່ກ່ຽວຂ້ອງພາຍໃນແຂວງ ກ່ຽວກັບ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 24/ນຍ ລົງວັນທີ 01/9/05 ແລະ ຂໍ້ຕົກລົງ ສະບັບລົງວັນທີ 28/7/05 ລະຫວ່າງ ກະຊວງການຄ້າ ແຫ່ງ ສປປລາວ ແລະ ກະຊວງການຄ້າ ສ.ສ ຫວຽດນາມ ວ່າດ້ວຍການໃຫ້ບຸລິມະສິດອັດຕາພາສີຂາເຂົ້າເຊິ່ງກັນ ແລະ ກັນ ສຳລັບສິນຄ້າຂອງ ສປປລາວ ແລະ ສ.ສ ຫວຽດນາມ.

2. ແນະນຳ ແລະ ເຜີຍແຜ່ການຈັດຕັ້ງປະຕິບັດການນຳເຂົ້າ ແລະ ສົ່ງອອກ ສຳລັບສິນຄ້າຂອງ ສປປລາວ ແລະ ສ.ສ ຫວຽດນາມ ທີ່ໄດ້ບຸລິມະສິດອັດຕາພາສີຂາເຂົ້າ ເຊິ່ງກັນ ແລະ ກັນ ຕາມແຈ້ງການສະບັບນີ້ໃຫ້ແກ່ ຫົວໜ່ວຍທຸລະກິດໃນນີ້ລວມທັງຂໍ້ຕົກລົງ ເລກທີ 0663/ກຄ.ຕປທ ລົງວັນທີ 16/7/04 ຂອງລັດຖະມົນຕີວ່າການກະຊວງການຄ້າ ວ່າດ້ວຍການປະກາດໃຊ້ລະບຽບການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ Form S ລະຫວ່າງ ສປປລາວ ແລະ ສ.ສ ຫວຽດນາມ.

5. ກຳນົດເວລາຈັດຕັ້ງປະຕິບັດການໃຫ້ບູລິມະສິດອັດຕາພາສີຂາເຂົ້າ ລະຫວ່າງ ສປປລາວ - ສ.ສ ຫວຽດນາມ ທີ່ໄດ້ລະບຸໄວ້ໃນແຈ້ງການ ສະບັບນີ້ ແມ່ນເລີ່ມແຕ່ວັນທີ 01/9/2005 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອແນະນຳໃຫ້ຫົວໜ່ວຍທຸລະກິດຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມນີ້ດ້ວຍ.

ລັດຖະມົນຕີ ວ່າການກະຊວງການຄ້າ

ອຸລວສະຫວ່າດ ສະແຫວງສັກສາ

ຄັດຕິດມາພ້ອມນີ້:

- ຄຳສັ່ງ ເລກທີ 24/ນຍ ລົງວັນທີ 01 ກັນຍາ 2005
- ຂໍ້ຕົກລົງສະບັບລົງວັນທີ 28/7/05 ແລະ ບັນຊີຄັດຕິດ

ບ່ອນສົ່ງ:

- ຫົວໜ້າຫ້ອງວ່າການສູນກາງພັກ ເພື່ອລາຍງານ
- ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອລາຍງານ
- ບັນດາກະຊວງ ເພື່ອຂໍຄວາມຮ່ວມມື
- ບັນດາແຂວງ, ນະຄອນຫຼວງ ແລະ ເຂດພິເສດ ເພື່ອຂໍຄວາມຮ່ວມມື
- ບັນດາກົມພາຍໃນກະຊວງ